ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມອຸດສາຫະກຳ ແລະ ຫັດຖະກຳ

# ແຜນການດຳເນີນງານສົ່ງເສີມ ແລະ ພັດທະນາວຽກງານຫັດຖະກຳ ໃນຂອບເຂດທົ່ວປະເທດ ( ນັບແຕ່ໄລຍະປີ 2016-2020 )

สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມອຸດສາຫະກຳ ແລະ ຫັດຖະກຳ

ເລກທີ 732 /ກອຫ.ຄສຫ

ນະຄອນຫຼວງວຽງຈັນ, ວັນທີ 01 AUG 2016

## ແຜນການດຳເນີນງານສົ່ງເສີມ ແລະ ພັດທະນາວຽກງານຫັດຖະກຳ ໃນຂອບເຂດທົ່ວປະເທດ
## ( ນັບແຕ່ໄລຍະ ປີ 2016-2020 )

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ, ສະບັບເລກທີ 24/ນຍ, ລົງວັນທີ 7 ພຶດສະພາ 2014 ວ່າດ້ວຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ( 2016-2020 ).
- ອີງຕາມບົດແນະນຳຂອງລັດຖະມົນຕີວ່າການກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2028/ຜທ, ລົງວັນທີ 02 ກັນຍາ 2014 ວ່າດ້ວຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ( 2016-2020 ).
- ອີງຕາມຍຸດທະສາດການພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ 10 ປີ ໄລຍະແຕ່ປີ 2011-2020 ສະບັບເລກທີ 0243/ອຄ, ລົງວັນທີ 04 ກຸມພາ 2010.

### I. ຈຸດປະສົງ, ວິໄສທັດ ແລະ ຄາດໝາຍສູ້ຊົນ.

### 1. ຈຸດປະສົງ.

ແຜນດຳເນີນງານນີ້ສ້າງຂຶ້ນມາ ເພື່ອຄວາມເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດເພື່ອສົ່ງເສີມ ແລະ ພັດທະນາວຽກງານຫັດຖະກຳໃນທົ່ວປະເທດໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ເຮັດໃຫ້ມີການປ່ຽນແປງວິທີການຜະລິດແບບທຳມະຊາດ ( ແບບດັ້ງເດີມຂອງປະຊາຊົນ ) ປ່ຽນແປງມາເປັນວິທີການຜະລິດເປັນສິນຄ້າຫັດຖະກຳ ທີ່ຈະພາໃຫ້ມີຄວາມຍືນຍົງໃນຕໍ່ໜ້າ ເພື່ອຕອບສະໜອງໃຫ້ແກ່ຜູ້ບໍລິໂພກໄດ້ຊົມໃຊ້ທັງຢູ່ພາຍໃນ ແລະ ຕ່າງປະເທດ. ອີກດ້ານໜຶ່ງ ເປັນການອະນຸລັກ, ຮັກສາເອກະລັກວັດທະນະທຳຂອງຊາດທີ່ບັນພະບູລຸດໄດ້ສ້າງໄວ້ໃຫ້ມີຄວາມຍືນຍົງ.

### 2. ວິໄສທັດ.

**ໃກ້ຊິດ, ຕິດແທດຊາວຊ່າງຫັດຖະກຳ ເພື່ອທຳການຜະລິດເປັນສິນຄ້າໃຫ້ມີຫຼາຍປະເພດ, ຍົກລະດັບຄວາມຮູ້, ຄວາມສາມາດ ແລະ ສີມືແຮງງານອັນປານີດເຂົ້າໃນການຜະລິດ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນ ແລະ ຮັກສາຮີດຄອງປະເພນີວັດທະນະທຳຂອງຊາດໄວ້ໃຫ້ຍືນຍົງ.**

### 3. ຄາດໝາຍສູ້ຊົນ.

ເພື່ອເຮັດໃຫ້ການຜະລິດສິນຄ້າຫັດຖະກຳໃນແຕ່ລະປີມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີຄວາມຍືນຍົງ ກົມອຸດສາຫະກຳ ແລະ ຫັດຖະກຳ ໄດ້ກຳນົດຄາດໝາຍສູ້ຊົນໃນໄລຍະ 2016- 2020 ມີດັ່ງນີ້:

1. ປັບປຸງດ້ານລະບຽບການຫັດຖະກຳ ເພື່ອເອື້ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ ແລະ ການດຳເນີນກິດຈະການໂຮງງານ.
2. ສູ້ຊົນໃຫ້ອັດຕາການຂະຫຍາຍຕົວຂອງການຜະລິດສິນຄ້າຫັດຖະກຳເພີ່ມຂຶ້ນສະເລ່ຍ 16 % / ປີ.
3. ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກຜະລິດຕະພັນສິນຄ້າຫັດຖະກຳ ( ລວມທັງການສົ່ງອອກກັບທີ່ ) ໃຫ້ເພີ່ມຂຶ້ນສະເລ່ຍບໍ່ຫຼຸດ 6 ລ້ານໂດລາ / ປີ.
4. ສ້າງກຸ່ມຫັດຖະກຳຕົວແບບໃນການຜະລິດສິນຄ້າ ໃຫ້ໄດ້ 5 ຫົວໜ່ວຍ / ປີ.
5. ຈັດຝຶກອົບຮົມ ເພື່ອສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ເຈົ້າໜ້າທີ່ຂອງລັດ ແລະ ຊາວຊ່າງຫັດຖະກຳໃຫ້ໄດ້ 04 ຄັ້ງ / ປີ.

## 4. ເງື່ອນໄຂທີ່ເອື້ອອຳນວຍ ແລະ ສິ່ງທ້າທາຍໃນການພັດທະນາວຽກງານຫັດຖະກຳ.

### ກ. ໂອກາດ.

1. ລັດຖະບານມີນະໂຍບາຍໃຫ້ການສະໜັບສະໜູນ ແລະ ສົ່ງເສີມຫັດຖະກຳ ເປັນວຽກງານບູລິມະສິດເພື່ອແກ້ໄຂຄວາມທຸກຍາກ.
2. ມີສະມາຄົມຫັດຖະກຳລາວ ຊຶ່ງເປັນຂົວຕໍ່ລະຫວ່າງສະມາຊິກ ແລະ ອົງການຈັດຕັ້ງອື່ນໆ ທີ່ເປັນຜູ້ຈັດຕັ້ງປະຕິບັດ.
3. ແຫຼ່ງວັດຖຸດິບທີ່ຈະສະໜອງໃຫ້ແກ່ການຜະລິດຫັດຖະກຳມີພຽງພໍກັບຄວາມຕ້ອງການ.
4. ແຮງງານມີມູນເຊື້ອເອກະລັກ ແລະ ປະຫວັດສືບທອດໃນການຜະລິດຫັດຖະກຳມາແຕ່ບັນພະບູລຸດ.
5. ໃນແຕ່ລະແຂວງທົ່ວປະເທດມີທ່າແຮງບົ່ມຊ້ອນທາງດ້ານການຜະລິດຫັດຖະກຳຫຼາກຫຼາຍ ເພື່ອຈະສ້າງເປັນຜະລິດຕະພັນທີ່ມີມູນຄ່າເພີ່ມສູງຂຶ້ນ.
6. ສິນຄ້າຫັດຖະກຳເປັນສິນຄ້າທີ່ມີຄວາມນິຍົມສູງທັງພາຍໃນ ແລະ ຕ່າງປະເທດ.
7. ມີການສະໜັບສະໜູນແຫຼ່ງທຶນຈາກພາຍໃນ ແລະ ຕ່າງປະເທດ.
8. ຜະລິດຕະພັນຫັດຖະກຳຂອງລາວເປັນເອກະລັກລວດລາຍສະເພາະດີເດັ່ນຂອງຕົນ ເຊິ່ງບໍ່ມີປະເທດໃດຄື.

### ຂ. ສິ່ງທ້າທາຍ.

1. ຄວາມຮູ້ ແລະ ຄວາມສາມາດຕໍ່ການພັດທະນານຳໃຊ້ເຕັກນິກ-ເຕັກໂນໂລຊີເຂົ້າຊ່ວຍໃນການຜະລິດຂອງຊາວຊ່າງຫັດຖະກຳຍັງມີຈຳກັດ.
2. ໂຮງງານ, ໂຮງຊ່າງຫັດຖະກຳ ສ່ວນຫຼາຍຕັ້ງຢູ່ຕາມບ້ານກະແຈກກະຈາຍ ແລະ ເສັ້ນທາງຄົມມະນາຄົມຂົນສົ່ງມີຄວາມຫຍຸ້ງຍາກໃນການລຳລຽງວັດຖຸດິບ ແລະ ສິນຄ້າ.
3. ຄວາມເຊື່ອໝັ້ນຂອງຊາວຊ່າງຫັດຖະກຳຕໍ່ຕະຫຼາດພາຍໃນ ແລະ ຕ່າງປະເທດຍັງມີລັກສະນະບໍ່ໜັກແໜ້ນ.
4. ດ້ານປະລິມານ ແລະ ຄຸນະພາບຂອງຜະລິດຕະພັນຫັດຖະກຳຍັງບໍ່ທັນຕອບສະໜອງໄດ້ກັບຄວາມຕ້ອງການຂອງຕະຫຼາດສາກົນໃນກໍລະນີມີການສັ່ງຊື້ເປັນຈຳນວນຫຼາຍ.
5. ຂະໜາດການຜະລິດສ່ວນຫຼາຍເປັນໂຮງງານຂະໜາດນ້ອຍ ແລະ ມີການຜະລິດແບບຄອບຄົວ.

6. ລະດັບສີມືແຮງງານຍັງບໍ່ທັນສູງ,  ປະລິມານການຜະລິດຈຳກັດ, ຄຸນະພາບຕ່ຳ ແລະ ຕົ້ນທຶນການຜະລິດສູງ ຊຶ່ງເປັນສາເຫດຕົ້ນຕໍທີ່ບໍ່ສາມາດຈະຍາດແຍ່ງການແຂ່ງຂັນທາງດ້ານການຕະຫຼາດໄດ້.
7. ການອອກແບບຜະລິດຕະພັນບໍ່ສອດຄ່ອງກັບຕະຫຼາດຕ່າງປະເທດ, ສ່ວນຫຼາຍການອອກແບບຜະລິດຕະພັນແມ່ນເນັ້ນໜັກໃສ່ຕະຫຼາດພາຍໃນເປັນຕົ້ນຕໍ.
8. ການເຂົ້າຫາແຫຼ່ງທຶນເພື່ອມາລົງທຶນໃສ່ວຽກງານຫັດຖະກຳມີຂອບເຂດຈຳກັດ, ໂດຍສະເພາະແມ່ນອັດຕາດອກເບ້ຍໃນການກູ້ຢືມຈາກທະນາຄານຍັງສູງ ສະເລ່ຍປະມານ 10-15 % ຕໍ່ປີ.
9. ກອງທຶນສົ່ງເສີມວຽກງານຫັດຖະກຳມີໜ້ອຍຖ້າທຽບໃສ່ຂະແໜງການອື່ນໆ.
10. ຄວາມຮູ້, ຄວາມສາມາດ ແລະ ການເຂົ້າຫາແຫຼ່ງຂໍ້ມູນຂ່າວສານທາງເອເລັກໂທນິກ ຂອງຊາວຊ່າງຫັດຖະກຳມີຈຳກັດ.

## II. ແຜນການພັດທະນາ ແລະ ສົ່ງເສີມຫັດຖະກຳ.

ເພື່ອເຮັດໃຫ້ວຽກງານຫັດຖະກຳ ນັບແຕ່ປີ 2016 - 2020 ໄດ້ຮັບການພັດທະນາ ແລະ ສົ່ງເສີມຢ່າງຕໍ່ເນື່ອງ ແລະ ມີຄວາມຍືນຍົງໃນຕໍ່ໜ້າ ຈຶ່ງໄດ້ກຳນົດແຜນງານໄວ້ ເພື່ອເປັນບ່ອນອີງໃຫ້ແກ່ ກົມອຸດສາຫະກຳ ແລະ ຫັດຖະກຳ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ; ແຜນດຳເນີນງານສະບັບນີ້ໄດ້ກຳນົດໄວ້ຈຳນວນ 10 ແຜນງານໃຫຍ່ ຄື: 1. ການສ້າງຕັ້ງກຸ່ມຫັດຖະກຳຕົວແບບ,  2. ການຈັດຝຶກອົບຮົມວິຊາຊີບຫັດຖະກຳ, 3. ການຈັດງານວາງສະແດງຫັດຖະກຳ, 4. ການສະໜອງແຫຼ່ງທຶນ, 5. ການສ້າງຄວາມເຂັ້ມແຂງດ້ານວິຊາການ, 6. ການສະຫງວນ ແລະ ການອະນຸລັກຫັດຖະກຳ, 7. ການສ້າງຖານຂໍ້ມູນ ແລະ ການສະໜອງຂໍ້ມູນຂ່າວສານ, 8. ການຖ່າຍທອດຂໍ້ມູນຂ່າວສານ ແລະ ການນຳໃຊ້ເຕັກໂນໂລຊີ, 9. ການສ້າງສູນຝຶກອົບຮົມຫັດຖະກຳ, 10. ການເຊື່ອມໂຍງ AEC.  ສ່ວນລາຍລະອຽດຂອງແຜນງານດັ່ງກ່າວໄດ້ສະແດງໃຫ້ເຫັນລຸ່ມນີ້:

### 1.  ການສ້າງຕັ້ງກຸ່ມຫັດຖະກຳຕົວແບບ.

ໃນສະພາບປະຈຸບັນການສ້າງຕັ້ງກຸ່ມຫັດຖະກຳຊຸມຊົນເອີ້ນວ່າເປັນຫົວໜ່ວຍການຜະລິດທີ່ນ້ອຍ ແລະ ມີຈຳນວນຫຼາຍທີ່ສຸດຢູ່ໃນປະເທດ, ເປັນຫົວໜ່ວຍການຜະລິດຮາກຖານ ເພື່ອປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ແລະ ແກ້ໄຂຄວາມທຸກຍາກຂອງຊຸມຊົນໃຫ້ນັບມື້ນັບດີຂຶ້ນ. ການເຕົ້າໂຮມຊາວຊ່າງ ເປັນກຸ່ມກ້ອນ ເພື່ອເປັນກຳລັງແຮງ ແລະ ຖານການຜະລິດທີ່ຍືນຍົງຄົງຕົວຂອງບ້ານທີ່ຕັ້ງຢູ່, ອີກດ້ານໜຶ່ງ ການສ້າງຕັ້ງກຸ່ມແມ່ນເພື່ອເປັນການຕິດຕໍ່ຊື້ - ຂາຍສິນຄ້າທີ່ມີກຳລັງແຮງໃນການຕໍ່ລອງດ້ານລາຄາ ແລະ ມີທ່າແຮງໃນການສຶກສາຄົ້ນຄ້ວາດ້ານການຕະຫຼາດທັງພາຍໃນ ແລະ ຕ່າງປະເທດ.

ການຈັດຕັ້ງກຸ່ມຫັດຖະກຳຊຸມຊົນຄວນມີຂະໜາດທີ່ເໝາະສົມ ຄື: ຈຳນວນສະມາຊິກຢູ່ພາຍໃນກຸ່ມບໍ່ຄວນໜ້ອຍ ຫຼື ຫຼາຍເກີນໄປ ເພື່ອຄວາມສະດວກໃນການຄຸ້ມຄອງ ແລະ ສົ່ງເສີມກຸ່ມດັ່ງກ່າວ; ຕາມປົກກະຕິແລ້ວເຫັນສົມຄວນແບ່ງຂະໜາດຂອງກຸ່ມອອກເປັນ 03 ຂະໜາດຄື: ຂະໜາດນ້ອຍ ມີ 5-15 ຄົນ, ຂະໜາດກາງ ມີ 16-30 ຄົນ ແລະ ຂະໜາດໃຫຍ່ ມີ 30 ຄົນຂຶ້ນໄປ; ສິ່ງສຳຄັນສຳລັບຜູ້ທີ່ຈະເຂົ້າມາເປັນສະມາຊິກກຸ່ມນັ້ນຄວນມີພື້ນຖານຄືກັນເຊັ່ນ: ມີເປົ້າໝາຍອັນດຽວກັນກ່ຽວກັບການສົ່ງເສີມ ແລະ ພັດທະນາຜະລິດຕະພັນໃຫ້ມີຄຸນນະພາບ, ການຮັກສາເອກະລັກສະເພາະຂອງທ້ອງຖິ່ນ, ການຮັກສາວັດທະນະທຳຂອງຊາດໄວ້ໃຫ້ຍືນ

ຍິງ ແລະ ດ້ານອື່ນໆ.

ໃນໄລຍະຜ່ານມາກ່ອນການສ້າງແຜນດຳເນີນງານສະບັບນີ້ໄດ້ມີການສ້າງຕັ້ງກຸ່ມຫັດຖະກຳເກີດຂຶ້ນແລ້ວຫຼາຍກຸ່ມ ເຊິ່ງກຸ່ມດັ່ງກ່າວແມ່ນເກີດຈາກການຊຸກຍູ້-ສົ່ງເສີມຂອງການຈັດຕັ້ງໃດໜຶ່ງ ຫຼື ເກີດມາຈາກຄວາມສະໝັກໃຈຂອງຊາວຊ່າງຫັດຖະກຳ ສະນັ້ນ, ຕ້ອງໄດ້ສົ່ງເສີມໃຫ້ກຸ່ມດັ່ງກ່າວໄດ້ສືບຕໍ່ປັບປຸງວິທີການຄຸ້ມຄອງ ແລະ ການສົ່ງເສີມກຸ່ມໃຫ້ມີຄວາມເຂັ້ມແຂງ ແລະ ກາຍເປັນກຸ່ມຕົວແບບຂອງຊຸມຊົນ. ສ່ວນລາຍລະອຽດໂຄງການຈັດຕັ້ງກຸ່ມຕົວແບບຂອງແຕ່ລະແຂວງນັ້ນໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍຂອງບົດແຜນດຳເນີນງານສະບັບນີ້.

## 2. ການຈັດຝຶກອົບຮົມວິຊາຊີບຫັດຖະກຳ.

ການຝຶກອົບຮົມວິຊາຊີບໃຫ້ແກ່ຊາວຊ່າງຫັດຖະກຳ ແມ່ນການຍົກລະດັບຄວາມຮູ້ຄວາມສາມາດໃນດ້ານສີມືແຮງງານທີ່ແຕກຕ່າງກັນຫຼາຍລະດັບຂອງຊຸມຊົນນັ້ນໃຫ້ດີຂຶ້ນກວ່າເດີມ, ການຝຶກອົບຮົມວິຊາຊີບຕ້ອງໄດ້ສ້າງເປັນໂຄງການສົ່ງເສີມວິຊາການລະອຽດ ແລະ ກຳນົດເປົ້າໝາຍໃຫ້ແນ່ນອນໃນແຕ່ລະປີ ເພື່ອນຳສະເໜີໃຫ້ກະຊວງແຜນການ ແລະ ການລົງທຶນອະນຸມັດງົບປະມານປະຈຳປີ ແລະ ລົງຈັດຕັ້ງປະຕິບັດໃຫ້ທັນເວລາຕາມແຜນການທີ່ໄດ້ກຳນົດໄວ້, ສ່ວນວິທີການຂຽນໂຄງການນັ້ນໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ປະຕິບັດຕາມແບບຟອມ ຂອງກະຊວງແຜນການ ແລະ ການລົງທຶນວາງອອກເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບການ.

## 3. ການຈັດງານວາງສະແດງຫັດຖະກຳ.

ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ຊຸກຍູ້, ສົ່ງເສີມ ແລະ ເອື້ອອຳນວຍຄວາມສະດວກໃຫ້ແກ່ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ສະມາຄົມຫັດຖະກຳ ໄດ້ຈັດງານປະເພນີວັນຫັດຖະກຳແຫ່ງຊາດ ໃນແຕ່ລະປີຢ່າງຕໍ່ເນື່ອງ, ງານດັ່ງກ່າວເປັນວັນທີ່ມີຄວາມໝາຍ ແລະ ຄວາມສຳຄັນທີ່ສຸດຂອງຊາວຊ່າງຫັດຖະກຳ ທີ່ໄດ້ມີໂອກາດເຕົ້າໂຮມຕົວແທນຜູ້ຜະລິດສິນຄ້າຫັດຖະກຳໃນທົ່ວປະເທດ ເພື່ອມາແລກປ່ຽນບົດຮຽນ ແລະ ດຳເນີນກິດຈະກຳຮ່ວມກັນ ເຊັ່ນ: ການສາທິດການຜະລິດສິນຄ້າຫັດຖະກຳ, ການປະກວດຜະລິດຕະພັນດີເດັ່ນເພື່ອສົ່ງເສີມເຄື່ອງຫັດຖະກຳໃຫ້ມີຄວາມຫຼາກຫຼາຍທັງປະລິມານ ແລະ ຄຸນນະພາບ, ການຈັດກອງປະຊຸມສຳມະນາ ແລະ ການຂາຍສິນຄ້າ ເພື່ອສ້າງໂອກາດໃຫ້ແກ່ການຊອກຫາຄູ່ລົງທຶນ ແລະ ຊອກຊ່ອງທາງໃນການໂຄສະນາສິນຄ້າ, ການເຈາະຕະຫຼາດພາຍໃນ ແລະ ຕ່າງປະເທດ ເປັນການເພີ່ມຍອດຂາຍ ເພື່ອສ້າງລາຍຮັບໃຫ້ແກ່ປະຊາຊົນທຸກຊົນເຜົ່າອີກດ້ວຍ.

## 4. ການສະໜອງແຫຼ່ງທຶນ.

ທຶນສະໜັບສະໜູນໃຫ້ແກ່ຜູ້ດຳເນີນກິດຈະການຫັດຖະກຳມີຄວາມສຳຄັນທີ່ສຸດ ເພື່ອນຳໃຊ້ເງິນຈາກແຫຼ່ງທຶນດັ່ງກ່າວມາເປັນທຶນໝູນວຽນ ແລະ ທຶນຄົງທີ່ ເພື່ອເຮັດໃຫ້ການຜະລິດມີຄວາມຍືນຍົງໃນຕໍ່ໜ້າ, ແຫຼ່ງເງິນທຶນຊາວຊ່າງຫັດຖະກຳອາດຈະໄດ້ມາຈາກ 04 ພາກສ່ວນ ຄື : ກອງທຶນຈາກລັດຖະບານ, ແຫຼ່ງເງິນທຶນຊາວຊ່າງຫັດຖະກຳ, ກອງທຶນບ້ານ ແລະ ທະນາຄານ.

ກອງທຶນຈາກລັດຖະບານ ເປັນແຫຼ່ງທຶນໂຄງການສົ່ງເສີມວິຊາການທີ່ມີຄວາມສຳຄັນທີ່ສຸດຕໍ່ການພັດທະນາຂອງຂະແໜງການຫັດຖະກຳໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ອີກດ້ານໜຶ່ງ ແຫຼ່ງທຶນດັ່ງກ່າວຊາວຊ່າງຫັດຖະກຳຈະໄດ້ນຳໃຊ້ເຂົ້າໃນການປັບປຸງເຕັກນິກ-ເຕັກໂນໂລຊີການຜະລິດໃຫ້ມີຄຸນະພາບ ແລະ ໄດ້ມາດຕະຖານ ເພື່ອຫຼຸດຜ່ອນໄລຍະເວລາການຜະລິດ ສະນັ້ນ, ຈຶ່ງສະເໜີໃຫ້ກະຊວງທີ່ກ່ຽວຂ້ອງຈົ່ງໄດ້ຄົ້ນຄວ້າພິຈາລະນາແຫຼ່ງທຶນເປັນອັນສະເພາະ ເພື່ອສົ່ງເສີມ ແລະ ພັດທະນາຂະແໜງການຫັດຖະກຳໃຫ້ມີຄວາມເຂັ້ມແຂງ ແລະ

ເຕີບໃຫຍ່ຂະຫຍາຍຕົວ ເພື່ອຈະເປັນການສ້າງພື້ນຖານໂຄງລ່າງທາງດ້ານການເງິນໃຫ້ມີແຫຼ່ງທຶນທີ່ ເໝາະສົມ ແລະ ໝັ້ນຄົງສາມາດສະໜອງທຶນໄດ້ຢ່າງສະໝໍ່າສະເໝີ ແລະ ທັນການໃຫ້ແກ່ຊາວຊ່າງຫັດຖະກໍາ.

ແຫຼ່ງທຶນຊາວຊ່າງຫັດຖະກໍາ ໝາຍເຖິງການປຸກລະດົມເງິນຈາກສະມາຊິກຊາວຊ່າງຜູ້ທີ່ສົນໃຈ ແລະ ຕ້ອງການທີ່ຈະເຂົ້າມາເປັນສະມາຊິກກຸ່ມ ເພື່ອສ້າງຕັ້ງກຸ່ມຫັດຖະກໍາ, ເພື່ອສ້າງອາຊີບເສີມ ຫຼື ອາຊີບຫຼັກໃຫ້ແກ່ຄອບຄົວ, ທໍາການຜະລິດເປັນສິນຄ້າ, ໃຊ້ເວລາຫວ່າງໃຫ້ເປັນປະໂຫຍດ ແລະ ສ້າງລາຍຮັບມາສູ່ຄອບຄົວ; ຈາກນັ້ນ ແຕ່ລະຄອບຄົວຈະໄດ້ຈ່າຍເງິນເຂົ້າເປັນກອງທຶນກຸ່ມ ເປັນກອງທຶນເບື້ອງຕົ້ນ ເພື່ອນໍາໄປລົງທຶນແລະ ເປັນການສ້າງການມີສ່ວນຮ່ວມຂອງສະມາຊິກກຸ່ມທັງໝົດ ທັງເປັນການສ້າງສາຍພົວພັນທີ່ດີງາມ ເພື່ອດໍາເນີນກິດຈະການໃນຕໍ່ໜ້າ.

ນອກຈາກນັ້ນ ແຫຼ່ງທຶນອື່ນໆທີ່ເປັນທາງເລືອກໜຶ່ງທີ່ສໍາຄັນຂອງຊາວຊ່າງຫັດຖະກໍາເຫັນສົມຄວນຄົ້ນຄວ້າພິຈາລະນາ ແລະ ຄວນເຂົ້າເຖິງແມ່ນແຫຼ່ງທຶນຈາກກອງທຶນບ້ານ ແລະ ແຫຼ່ງທຶນຈາກທະນາຄານ ເນື່ອງຈາກວ່າແຫຼ່ງທຶນດັ່ງກ່າວມີຄວາມເໝາະສົມຕໍ່ການກູ້ຢືມຂອງຊາວຊ່າງຫັດຖະກໍາເພາະໄດ້ຈ່າຍຄ່າດອກເບ້ຍໃຫ້ແກ່ກອງທຶນບ້ານໃນແຕ່ລະເດືອນດ້ວຍອັດຕາດອກເບ້ຍຕໍ່າ ແລະ ໄລຍະເວລາໃນການກູ້ຢືມເໝາະສົມກັບເງື່ອນໄຂຄວາມສາມາດຂອງຜູ້ສະເໜີຕໍ່ຄະນະກໍາມະການຄຸ້ມຄອງກອງທຶນບ້ານ, ອີກດ້ານໜຶ່ງ ກອງທຶນດັ່ງກ່າວເປັນການສົ່ງເສີມ ແລະ ພັດທະນາບ້ານໃນດ້ານການຮຽນຮູ້ ແລະ ຍົກລະດັບຄວາມສາມາດ ແລະ ພັດທະນາແນວຄວາມຄິດເບື້ອງຕົ້ນຂອງຊາວຊ່າງຫັດຖະກໍາ ໃຫ້ມີຄວາມສາມັກຄີກັນຢ່າງພ້ອມພຽງ ກ່ຽວກັບການຜະລິດເປັນສິນຄ້າ.

## 5. ການສ້າງຄວາມເຂັ້ມແຂງດ້ານວິຊາການ.

ການສ້າງຄວາມເຂັ້ມແຂງດ້ານວຽກງານຫັດຖະກໍາໃຫ້ແກ່ວິຊາການຂັ້ນສູນກາງ ແລະທ້ອງຖິ່ນ ຖືເປັນບັນຫາທີ່ສໍາຄັນທີ່ສຸດ ເຊິ່ງເປັນບັນຫາຕັດສິນປະສິດທິຜົນຂອງວຽກງານໃຫ້ປະສົບຜົນສໍາເລັດ, ດ້ວຍເຫດນັ້ນ ການນໍາຂັ້ນສູງທຸກຂັ້ນຄວນມີແຜນການກໍ່ສ້າງພະນັກງານວິຊາການ ໄລຍະສັ້ນ, ໄລຍະກາງ ຫຼື ໄລຍະຍາວ ເພື່ອຍົກລະດັບຄວາມຮູ້ ແລະ ຄວາມສາມາດຢູ່ພາຍໃນ ຫຼື ຕ່າງປະເທດຢ່າງເປັນລະບົບ ແລະ ມີການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ. ອີກດ້ານໜຶ່ງ ເພື່ອເຮັດໃຫ້ວຽກງານຫັດຖະກໍາໄດ້ຮັບການສົ່ງເສີມ ແລະ ພັດທະນາຢ່າງຕໍ່ເນື່ອງ ວິຊາການຂອງກົມອຸດສາຫະກໍາ ແລະ ຫັດຖະກໍາ ແລະ ກົມກອງອ້ອມຂ້າງອື່ນໆທີ່ກ່ຽວຂ້ອງຕ້ອງລົງໃກ້ສິດ-ຕິດແທດກັບວິຊາການທ້ອງຖິ່ນຢ່າງເປັນປົກກະຕິ ເພື່ອລົງເກັບກໍາຂໍ້ມູນຕົວຈິງ ແລະ ຂຶ້ນແຜນການຈັດຝຶກອົບຮົມເປັນແຕ່ໄລຍະຕາມຄວາມເໝາະສົມ.

## 6. ການອະນຸລັກ ແລະ ການສະຫງວນຫັດຖະກໍາ.

ໃນໄລຍະປະຈຸບັນ ແລະ ຕໍ່ໜ້າ ການອະນຸລັກ ແລະ ການສະຫງວນຫັດຖະກໍາ ມີບົດບາດສໍາຄັນຫຼາຍເພື່ອປົກປ້ອງບໍ່ໃຫ້ຫັດຖະກໍາຖືກທໍາລາຍ ຫຼື ສູນຫາຍໄປ, ຮັກສາໄດ້ຮີດຄອງປະເພນີຂອງຊາດໄວ້ໃຫ້ມີຄວາມຍືນຍົງ, ວິທີການອະນຸລັກຫັດຖະກໍາຕ້ອງໄດ້ເກັບກໍາ, ຂຶ້ນບັນຊີ ແລະ ເຮັດການຄົ້ນຄ້ວາ, ຂຽນເປັນປຶ້ມຕໍາລາໄວ້, ຫຼັງຈາກນັ້ນ, ໃຫ້ນໍາເອົາປຶ້ມຕໍາລາວິທີການຜະລິດສ້າງເປັນຫຼັກສູດການຮຽນ, ການສອນໃຫ້ຄົນລຸ້ນໃໝ່ໄດ້ຮຽນຮູ້ ແລະ ສືບທອດວັດທະນາທໍາທີ່ດີງາມຂອງຊາດໄວ້ໃຫ້ມີຄວາມຍືນຍົງຕະຫຼອດໄປ.

## 7. ການສ້າງຖານຂໍ້ມູນ ແລະ ການສະໜອງຂໍ້ມູນຂ່າວສານ.

ໃນສະພາບປະຈຸບັນການນໍາໃຊ້ IT ເຂົ້າໃນວຽກງານການເກັບກໍາຂໍ້ມູນຫັດຖະກໍາ ເປັນສິ່ງທີ່ໄດ້ຮັບການສົ່ງເສີມ ແລະ ພັດທະນາໃຫ້ດີທີ່ສຸດ, ເນື່ອງຈາກວ່າຂໍ້ມູນດັ່ງກ່າວນັ້ນໄດ້ມາເພື່ອໝູນໃຊ້ເຂົ້າໃນການວາງແຜນການສົ່ງເສີມຫັດຖະກໍາໃນປະຈຸບັນ ແລະ ຕໍ່ໜ້າ. ດັ່ງນັ້ນ, ການສະໜອງອຸປະກອນເພື່ອມາຮັບໃຊ້ໃນການສ້າງ

ຖານຂໍ້ມູນຫັດຖະກຳ ຄວນໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງນັບແຕ່ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນກະຊວງ ເພື່ອສ້າງລະບົບໃຫ້ສາມາດເຊື່ອມໂຍງກັນໄດ້ລະຫວ່າງສູນກາງ ແລະ ທ້ອງຖິ່ນ. ນອກຈາກການພັດທະນາລະບົບ IT ເພື່ອສ້າງຖານຂໍ້ມູນແລ້ວ ເຫັນສົມຄວນໃຫ້ສ້າງຄວາມເຂັ້ມແຂງແກ່ວິຊາການເພື່ອຍົກລະດັບຄວາມຮູ້ ແລະ ຄວາມສາມາດໃນການນຳໃຊ້ຄອມພິວເຕີ ແລະ ວິທີການໃນການລົງເກັບກຳຂໍ້ມູນຕາມຫຼັກວິຊາການໃຫ້ແກ່ພະນັກງານທຸກຂັ້ນ. ອີກດ້ານໜຶ່ງ, ການລາຍງານຂໍ້ມູນສະຖິຕິ ລະຫວ່າງກະຊວງ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ສະເໜີໃຫ້ມີການປະສານສົມທົບກັນ, ມີລະບົບຂັ້ນຕອນການລາຍງານທີ່ດີ ແລະ ຄວນເຮັດເປັນປົກກະຕິທຸກໆ 3 ເດືອນ, 6 ເດືອນ, 9 ເດືອນ ແລະ ໜຶ່ງປີ.

## 8. ການຖ່າຍທອດຂໍ້ມູນຂ່າວສານ ແລະ ການນຳໃຊ້ເຕັກໂນໂລຊີ.

ໃນສະພາບປະຈຸບັນການເຂົ້າເຖິງຂໍ້ມູນເປັນສິ່ງສຳຄັນ ເພື່ອເປັນການຍົກສູງຜະລິດຕະພາບ ແລະ ຄຸນນະພາບຂອງການຜະລິດເຮັດໃຫ້ຜະລິດຕະພັນຫັດຖະກຳສາມາດແຂ່ງຂັນໄດ້ໃນໄລຍະການເຊື່ອມໂຍງກັບບັນດາປະເທດອາຊຽນ ແລະ ປະເທດອື່ນໆໃນໂລກ ຂະແໜງການທີ່ກ່ຽວຂ້ອງຄວນມີນະໂຍບາຍອັນເໝາະສົມ ເພື່ອສົ່ງເສີມໃຫ້ແກ່ການລົງທຶນເພື່ອສ້າງຕັ້ງໂຮງງານ, ໂຮງຊ່າງຫັດຖະກຳໄດ້ຮັບນະໂຍບາຍ ເພື່ອຫຼຸດຜ່ອນຕົ້ນທຶນການນຳເຂົ້າເຄື່ອງຈັກທີ່ມາຮັບໃຊ້ແກ່ການຜະລິດຂອງໂຮງງານ, ໂຮງຊ່າງຫັດຖະກຳ ເພື່ອຫຼຸດຜ່ອນເວລາຂອງການຜະລິດ, ເຮັດໃຫ້ຜະລິດຕະພັນມີປະລິມານ, ມີຄຸນະພາບ ແລະ ສ້າງມູນຄ່າເພີ່ມໃຫ້ສູງຂຶ້ນ.

## 9. ການສ້າງສູນສົ່ງເສີມຫັດຖະກຳ.

ໃນໄລຍະຕົ້ນຄວນສ້າງສູນສົ່ງເສີມຫັດຖະກຳຂຶ້ນໃໝ່ ເພື່ອເປັນສູນຕົວແບບຢູ່ແຂວງໃດໜຶ່ງທີ່ມີທ່າແຮງເໝາະສົມກັບສະພາບເງື່ອນໄຂຄວາມເປັນຈິງ, ລັດສົ່ງເສີມໃຫ້ເອກະຊົນ ຫຼື ອົງການຈັດຕັ້ງສາກົນສະໜອງທຶນຮອນເຂົ້າໃນການສ້າງສູນສົ່ງເສີມຫັດຖະກຳ ເພື່ອເປັນສະຖານທີ່ຈຳໜ່າຍສິນຄ້າຫັດຖະກຳ ສິ່ງສຳຄັນແມ່ນນຳໃຊ້ເປັນບ່ອນຝຶກອົບຮົມອາຊີບໃຫ້ແກ່ຊາວຊ່າງຫັດຖະກຳ ເພື່ອຍົກລະດັບສີມືແຮງງານ, ທັງເປັນບ່ອນຄົ້ນຄວ້າ, ສາທິດການຜະລິດ, ການເປີດກອງປະຊຸມວິຊາການ ເພື່ອແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ, ເປັນສະຖານທີ່ເຈລະຈາ ການຊື້-ການຂາຍ, ການໂຄສະນາຜະລິດຕະພັນສິນຄ້າຫັດຖະກຳ ເພື່ອສົ່ງເສີມການຕະຫຼາດພາຍໃນ ແລະ ຕ່າງປະເທດ ເພື່ອສ້າງວຽກເຮັດງານທຳທັງເປັນການອະນຸລັກ ແລະ ປົກປັກຮັກສາຫັດຖະກຳທີ່ເປັນມູນເຊື້ອຂອງປະຊາຊົນບັນດາເຜົ່າ ເຊິ່ງເປັນເອກະລັກສະເພາະຂອງຊາດໄວ້ໃຫ້ຍືນຍົງຕະຫຼອດໄປ.

## 10. ການເຊື່ອມໂຍງ AEC.

ໃນສະພາບປະຈຸບັນການຮ່ວມມືກັບບັນດາປະເທດອາຊຽນມີບົດບາດສຳຄັນຫຼາຍ ເຊິ່ງມັນໄດ້ສ້າງໂອກາດຫຼາຍຢ່າງໃນການພັດທະນາເສດຖະກິດສັງຄົມຂອງປະເທດ ແລະ ການພັດທະນາພາກທຸລະກິດ ເຖິງແມ່ນວ່າການເຊື່ອມໂຍງນີ້ຈະຢູ່ໃນສະພາບແວດລ້ອມທ່າມກາງການແຂ່ງຂັນເພີ່ມຂຶ້ນ, ແຕ່ມັນເປັນໂອກາດທີ່ດີໃຫ້ແກ່ຊາວຊ່າງຫັດຖະກຳໄດ້ເຂົ້າເຖິງຕະຫຼາດໃຫຍ່ຂອງອາຊຽນ. ສະນັ້ນ, ຊາວຊ່າງຫັດຖະກຳຕ້ອງໄດ້ປັບປຸງວິທີການຜະລິດສິນຄ້າໃຫ້ໄດ້ທັງປະລິມານ ແລະ ຄຸນະພາບ, ໃຫ້ມີການສ້າງມູນຄ່າເພີ່ມສູງຂຶ້ນ, ໃຫ້ເປັນທີ່ຍອມຮັບຂອງລູກຄ້າ ແລະ ສອດຄ່ອງກັບຕະຫຼາດໃໝ່ຂອງປະເທດອາຊຽນ ແລະ ເປັນການດຶງດູດການທ່ອງທ່ຽວຈາກຕ່າງປະເທດ. ນອກຈາກສິ່ງທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ ຍັງໄດ້ມີການແລກປ່ຽນບົດຮຽນດ້ານການນຳໃຊ້ເຕັກນິກ - ເຕັກໂນໂລຊີ ເຂົ້າໃນຂະບວນການຜະລິດ, ການພັດທະນາສີມືແຮງງານ, ການແລກປ່ຽນວັດທະນາທຳລະຫວ່າງປະເທດ ເຊິ່ງລາຍລະອຽດໄດ້ກຳນົດແຜນວຽກດັ່ງນີ້:

1) ການແລກປ່ຽນບົດຮຽນກ່ຽວກັບການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຜະລິດຫັດຖະກຳ.
2) ການໄປສຶກສາວຽກງານກ່ຽວກັບການພັດທະນາຍົກລະດັບຄວາມຮູ້, ຄວາມສາມາດໃຫ້ແກ່ບຸກຄະລາກອນໃນອົງກອນດ້ານ TOT ໃນຂະແໜງຫັດຖະກຳ ເຊິ່ງເປັນການພັດທະນາຊັບພະຍາກອນມະນຸດ.
3) ການທັດສະນະສຶກສາກ່ຽວກັບການພັດທະນາຊຸມຊົນໃຫ້ເປັນຕົວແບບກ່ຽວກັບຫັດຖະກຳ.
4) ການຝຶກອົບຮົມສຳມະນາການສົ່ງເສີມການຕະຫຼາດຫັດຖະກຳໃຫ້ເຊື່ອມໂຍງກັບການທ່ອງທ່ຽວ (AEC).

## III. ວິທີການສົ່ງເສີມ ແລະ ພັດທະນາຫັດຖະກຳ.

ສົ່ງເສີມການຜະລິດຫັດຖະກຳທີ່ເປັນມູນເຊື້ອ, ເປັນເອກະລັກຂອງຊາດ ໂດຍສຸມໃສ່ຫັດຖະກຳຄອບຄົວເປັນຈຸດຫຼັກ ເພື່ອເຮັດໃຫ້ຂະແໜງການຫັດຖະກຳກາຍເປັນໜໍ່ແໜງຂອງຊາດ ພ້ອມດຽວກັນນັ້ນກໍ່ຊຸກຍູ້-ສົ່ງເສີມໃຫ້ຫັດຖະກຳຂະໜາດນ້ອຍ, ກາງ ແລະ ໃຫຍ່ ໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ເປົ້າໝາຍເພື່ອສ້າງລາຍຮັບແຫ່ງຊາດໃຫ້ເພີ່ມຂຶ້ນ, ການຜະລິດຫັດຖະກຳຕ້ອງສຸມໃສ່ການອະນຸລັກຫັດຖະກຳພື້ນເມືອງໄປຄຽງຄູ່ກັບການຜະລິດຫັດຖະກຳແບບປະຍຸກ ( ແບບປະສົມປະສານ) ນຳໃຊ້ວັດຖຸດິບຈາກທຳມະຊາດ ເພື່ອປຸງແຕ່ງເປັນຜະລິດຕະພັນແບບຍືນຍົງດ້ວຍການສ້າງມູນຄ່າເພີ່ມໃຫ້ຫຼາຍ ແລະ ຜະລິດເປັນສິນຄ້າ ເພື່ອຕອບສະໜອງຕະຫຼາດພາຍໃນ ແລະ ສົ່ງອອກຕ່າງປະເທດ ປະກອບສ່ວນແກ້ໄຂຄວາມທຸກຍາກເທື່ອລະກ້າວແກ່ປະຊາຊົນບັນດາເຜົ່າກໍ່ຄືການຫຼຸດພົ້ນອອກຈາກປະເທດດ້ອຍພັດທະນາ. ການສົ່ງເສີມ ແລະ ພັດທະນາວຽກງານຫັດຖະກຳຕ້ອງປະຕິບັດຕາມນະໂຍບາຍ ແລະ ມາດຕະການຕົ້ນຕໍດັ່ງນີ້:

1) ການສ້າງແຜນໂຄງການບູລິມາສິດສົ່ງເສີມຫັດຖະກຳໃນທົ່ວປະເທດ.
2) ພັດທະນາເວທີປຶກສາຫາລືລະຫວ່າງພາກລັດ ແລະ ຊາວຊ່າງຫັດຖະກຳ.
3) ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວຊ່າງຫັດຖະກຳ ໂດຍການຍົກລະດັບສີມືແຮງງານ ແລະ ການອອກແບບຜະລິດຕະພັນໃຫ້ເໝາະສົມກັບຕະຫຼາດພາຍໃນ ແລະ ຕ່າງປະເທດ.
4) ປັບປຸງການປະສານງານລະຫວ່າງສູນກາງກັບທ້ອງຖິ່ນ, ຂະແໜງການອຸດສາຫະກຳ ແລະ ການຄ້າກັບຂະແໜງການອື່ນໆ.
5) ປັບປຸງເຄື່ອງມືການຜະລິດໃຫ້ໄດ້ມາດຕະຖານ ເພື່ອເພີ່ມປະສິດຕິພາບຂອງການຜະລິດໃຫ້ດີຂຶ້ນ.
6) ຄົ້ນຄວ້າພິຈາລະນາສ້າງຕັ້ງກອງທຶນຫັດຖະກຳ ເພື່ອຊຸກຍູ້-ສົ່ງເສີມໃຫ້ຊາວຊ່າງຫັດຖະກຳໄດ້ກູ້ຢືມດ້ວຍດອກເບ້ຍຕ່ຳ.
7) ປັບປຸງຂັ້ນຕອນການສະໜອງວັດຖຸດິບ ແລະ ການເຄື່ອນຍ້າຍວັດຖຸດິບພາຍໃນປະເທດໃຫ້ມີຄວາມສະດວກ ແລະ ການກຳນົດລາຄາວັດຖຸດິບໃຫ້ມີຄວາມເໝາະສົມ.
8) ສ້າງຄວາມເຂັ້ມແຂງໃຫ້ແກ່ວິຊາການຂັ້ນສູນກາງ ແລະ ທ້ອງຖິ່ນ ( ດ້ວຍການຈັດຝຶກອົບຮົມ ).
9) ຊຸກຍູ້ ແລະ ສົ່ງເສີມດ້ານການຕະຫຼາດໃຫ້ເຊື່ອມໂຍງກັບການທ່ອງທ່ຽວ.
10) ປັບປຸງກົນໄກ ແລະ ນິຕິກຳ ເພື່ອເອື້ອອຳນວຍໃຫ້ແກ່ການລົງທຶນ ແລະ ການດຳເນີນກິດຈະການ.

## IV. ກົນໄກການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ການປະເມີນຜົນ.

### 1. ການປະສານງານ ແລະ ຈັດຕັ້ງປະຕິບັດ:

#### ກ. ກະຊວງອຸດສາຫະກຳ ແລະ ການຄ້າ.

ກະຊວງອຸດສາຫະກຳ ແລະ ການຄ້າ ມີບົດບາດສຳຄັນໃນການເອື້ອອຳນວຍຄວາມສະດວກ, ຊຸກຍູ້-ສົ່ງເສີມ ເພື່ອເຮັດໃຫ້ແຜນດຳເນີນງານສະບັບນີ້ມີຜົນສຳເລັດ. ປັດໃຈຕົ້ນຕໍແມ່ນການຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານວິຊາການ, ພ້ອມກັນນັ້ນກໍ່ໃຫ້ທິດຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານຫັດຖະກຳໃນຂອບເຂດທົ່ວປະເທດຢ່າງໃກ້ສິດ, ໂດຍສະເພາະແມ່ນການຍາດແຍ່ງການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ເພື່ອຈັດຕັ້ງປະຕິບັດມາດຕະການ, ໂຄງການ ແລະ ກິດຈະການຕ່າງໆທີ່ໄດ້ກຳນົດໄວ້. ນອກຈາກນັ້ນ ໃຫ້ຄວາມຮ່ວມມື ແລະ ການຊ່ວຍເຫຼືອປະສານງານກັບບັນດາກະຊວງ ເພື່ອບັນຈຸວຽກງານຫັດຖະກຳໃຫ້ມີການເຊື່ອມໂຍງກັບໜ້າວຽກຂອງຂະແໜງການທີ່ກ່ຽວຂ້ອງ.

#### ຂ. ກົມອຸດສາຫະກຳ ແລະ ຫັດຖະກຳ.

ກົມອຸດສາຫະກຳ ແລະ ຫັດຖະກຳມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການສົ່ງເສີມ, ການລົງທຶນຫັດຖະກຳ, ຕິດຕາມ, ກວດກາໂຮງງານ ແລະ ໂຮງຊ່າງຫັດຖະກຳ. ປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ເພື່ອແກ້ໄຂຄວາມທຸກຍາກ, ນອກນັ້ນກໍ່ສົ່ງເສີມການນຳໃຊ້ວັດຖຸດິບຈາກຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນ, ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ, ເພີ່ມປະລິມານ ແລະ ຄຸນະພາບໃຫ້ແກ່ຜະລິດຕະພັນ ເຊິ່ງມີໜ້າທີ່ຕົ້ນຕໍດັ່ງນີ້:

1) ຄົ້ນຄ້ວາ, ສ້າງລະບຽບການ, ຄູ່ມື, ແຜນດຳເນີນງານ ແລະ ເຜີຍແຜ່ບັນດານິຕິກຳ ແລະ ແຜນດຳເນີນງານຫັດຖະກຳສະບັບນີ້ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງລວມທັງພາກລັດ, ໂຮງງານຫັດຖະກຳ, ໂຮງຊ່າງຫັດຖະກຳ, ກຸ່ມຫັດຖະກຳ ແລະ ຫົວໜ່ວຍຫັດຖະກຳແບບຄອບຄົວໄດ້ຮັບຊາບ ແລະ ເຂົ້າໃຈຢ່າງທົ່ວເຖິງ.
2) ຂຶ້ນແຜນ ແລະ ລົງຈັດຕັ້ງປະຕິບັດງານເປັນແຕ່ລະໄລຍະ ເພື່ອສົ່ງເສີມກິດຈະການຫັດຖະກຳປຸງແຕ່ງໃຫ້ຂະຫຍາຍຕົວ ແລະ ມີປະສິດທິຜົນໃນການຜະລິດສິນຄ້າ ເພື່ອຈຳໜ່າຍພາຍໃນ ແລະ ຕ່າງປະເທດ.
3) ປຸກລະດົມແຫຼ່ງທຶນຕ່າງໆ ເພື່ອຈັດຕັ້ງປະຕິບັດບັນດາມາດຕະການ, ໂຄງການ ແລະ ກິດຈະການທີ່ໄດ້ລະບຸໄວ້ຢູ່ໃນແຜນດຳເນີນງານສະບັບນີ້.
4) ປະສານງານ ແລະ ຊຸກຍູ້ໜ່ວຍງານທີ່ກ່ຽວຂ້ອງໃນລະດັບສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງປະຕິບັດແຜນດຳເນີນງານສະບັບນີ້ໃຫ້ມີຜົນສຳເລັດດີ.
5) ຕິດຕາມກວດກາ, ປະເມີນຜົນ ແລະ ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນດຳເນີນງານສະບັບນີ້ຢ່າງເປັນປະຈຳ.

#### ຄ. ພະແນກອຸດສາຫະກຳ ແລະ ການຄ້າແຂວງ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນມີສິດ ແລະ ໜ້າທີ່ດັ່ງນີ້:

1) ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນດຳເນີນງານໃຫ້ສຳເລັດຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

2) ໃຫ້ຄຳປຶກສາ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານຫັດຖະກຳ ໃຫ້ແກ່ຊາວຊ່າງຫັດຖະກຳໃຫ້ທົ່ວເຖິງ.
3) ຊີ້ນຳ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານຫັດຖະກຳຂອງແຂວງ, ນະຄອນຫຼວງວຽງຈັນ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແລະ ເທດສະບານ.
4) ແກ້ໄຂຂໍ້ຂັດແຍ່ງກ່ຽວກັບວຽກງານຫັດຖະກຳ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
5) ເປັນໃຈກາງປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງກັບການສົ່ງເສີມ ແລະ ພັດທະນາວຽກງານຫັດຖະກຳ.
6) ພົວພັນຮ່ວມມືກັບສາກົນກ່ຽວກັບວຽກງານຫັດຖະກຳຕາມການມອບໝາຍຂອງ ກະຊວງອຸດສາຫະກຳ ແລະ ການຄ້າ.
7) ສະຫຼຸບປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດວຽກງານຫັດຖະກຳ ເພື່ອລາຍງານຂັ້ນເທິງ.
8) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ກ່ຽວກັບວຽກງານຫັດຖະກຳຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ງ. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ.**

1) ຈັດຕັ້ງປະຕິບັດແຜນການ, ນະໂຍບາຍການພັດທະນາ, ລະບຽບກົດໝາຍກ່ຽວກັບວຽກງານຫັດຖະກຳໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
2) ລົງເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບແຜນດຳເນີນງານສະບັບນີ້ໃຫ້ແກ່ຊາວຊ່າງຫັດຖະກຳ ເພື່ອຜັນຂະຫຍາຍ ແລະ ລົງຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດ ແລະ ທັນເວລາ.
3) ປະສານສົມທົບກັບອົງການຄຸ້ມຄອງບ້ານໃນການຈັດຕັ້ງວຽກງານຫັດຖະກຳ.
4) ເກັບກຳຂໍ້ມູນກ່ຽວກັບການຜະລິດຫັດຖະກຳໃນທ້ອງຖິ່ນຂອງຕົນ.
5) ສະຫຼຸບ, ປະເມີນຜົນກ່ຽວກັບການຈັດຕັ້ງປະຕິບັດວຽກງານຫັດຖະກຳ ເພື່ອລາຍງານຂັ້ນເທິງ ແລະ ວຽກງານອື່ນໆ.

## 2. ຂະແໜງການທີ່ກ່ຽວຂ້ອງ.

ບັນດາຂະແໜງການ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດແຜນພັດທະນາຫັດຖະກຳສະບັບນີ້ຕາມພາລະບົດບາດຂອງຕົນ ເນື່ອງຈາກວ່າການສົ່ງເສີມ ແລະ ພັດທະນາຫັດຖະກຳມີຄວາມກ່ຽວພັນກັນຢ່າງສະໜິດແໜ້ນກັບຂະແໜງການທີ່ປິ່ນອ້ອມ. ສະນັ້ນ, ທຸກໆພາກສ່ວນທີ່ກ່ຽວຂ້ອງຈຶ່ງໄດ້ໃຫ້ການຮ່ວມມື ແລະ ເອື້ອອຳນວຍຄວາມສະດວກເຊັ່ນ: ດ້ານການລົງທຶນ, ດ້ານລະບຽບການ, ຂັ້ນຕອນການນຳເຂົ້າວັດຖຸດິບຈາກຕ່າງປະເທດ ຫຼື ການນຳໃຊ້ວັດຖຸດິບມາຮັບໃຊ້ການຜະລິດຂອງຊາວຊ່າງຫັດຖະກຳຢູ່ພາຍໃນ ເພື່ອຫຼຸດຜ່ອນດ້ານຕົ້ນທຶນການຜະລິດ ເຮັດໃຫ້ການຜະລິດສິນຄ້າຫັດຖະກຳມີຫຼາຍປະເພດ, ທັງຮັບປະກັນໄດ້ດ້ານປະລິມານ ແລະ ຄຸນະພາບ ຕອບສະໜອງໃຫ້ແກ່ຄວາມຕ້ອງການພາຍໃນ ແລະ ເປັນສິນຄ້າສົ່ງອອກຕ່າງປະເທດ ສາມາດແຂ່ງຂັນໄດ້ດ້ານການຕະຫຼາດໃນຍຸກສະໃໝເຊື່ອມໂຍງກັບບັນດາປະເທດສະມາຊິກອາຊຽນ ເປັນການສ້າງວຽກເຮັດງານທຳ ແລະ ລາຍຮັບໃຫ້ແກ່ຊາວຊ່າງຫັດຖະກຳ.

### 3. ການຕິດຕາມກວດກາ, ປະເມີນຜົນ ແລະ ການລາຍງານ.

ການຕິດຕາມ, ກວດກາ ແລະ ປະເມີນຜົນ ແມ່ນມີຄວາມຈຳເປັນ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນສົ່ງເສີມ ແລະ ພັດທະນາວຽກງານຫັດຖະກຳເພາະຈະຊ່ວຍໃຫ້ການເກັບກຳຂໍ້ມູນກ່ຽວກັບຄວາມຄືບໜ້າ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກລວມທັງຜົນກະທົບ ເພື່ອລາຍງານໃຫ້ຂັ້ນເທິງຊາບ ແລະ ຂໍທິດຊີ້ນຳເພື່ອປັບປຸງແກ້ໄຂຢ່າງທັນການ, ໃນກໍລະນີຈຳເປັນກົມອຸດສາຫະກຳ ແລະ ຫັດຖະກຳຈະໄດ້ຕິດຕາມປະເມີນຜົນການຈັດຕັ້ງປະຕິບັດແຜນການສົ່ງເສີມ ແລະ ພັດທະນາຫັດຖະກຳ ປີ 2016-2020 ຮ່ວມກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ. ເພື່ອລາຍງານໃຫ້ຂັ້ນເທິງຊາບເປັນແຕ່ລະໄລຍະດ້ວຍຄວາມເໝາະສົມ.

**ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ**

ມະໂນຣັກ ຣາຊະຈັກ

ຂໍ້ມູນຫັດຖະກຳ ທີ່ເປັນທ່າແຮງບົ່ມຊ້ອນ. ( ພາກເໜືອ, ກາງ ແລະ ໃຕ້ ). ໃນທົ່ວປະເທດ

ປີ 2016-2020

( ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ).

**ເອກະສານຊ້ອນທ້າຍ 1**

**ກ. ພາກເໜືອ.**

| ລ/ດ | ປະເພດກິດຈະການດຳເນີນ |
|---|---|
| 1 | ຕ່ຳແຜ່ນແພ, ຕ່ຳຫູກ-ທໍໄໝ ຫຼື ສາວໄໝ |
| 2 | ຫັດຖະກຳສາດຫວາຍ |
| 3 | ຫັດຖະກຳປູກມອນລ້ຽງມ້ອນ, ສາວໄໝ |
| 4 | ຫັດຖະກຳຕຸກກະຕາ |
| 5 | ຫັດຖະກຳຈັກສານຫວາຍໄມ້ປ່ອງ ແລະ ເຄືອໄມ້ |
| 6 | ຫັດຖະກຳຍູກວາດ (ແຂມ) |
| 7 | ຫັດຖະກຳຝ້າຍ( ການອື້ວ, ເຂັນ ແລະ ການຍ້ອມສີທຳມະຊາດ ) |
| 8 | ຫັດຖະກຳຄວັດແກະສະຫຼັກ ແລະ ຜະລິດຕະພັນໄມ້ |
| 9 | ຫັດຖະກຳຄວັດລວດລາຍ |
| 10 | ຫັດຖະກຳຜະລິດເຈ້ຍປໍສາ |
| 11 | ເຄື່ອງປັ້ນດິນເຜົາ |
| 12 | ຫັດຖະກຳຮູບແຕ້ມ |
| 13 | ຫັດຖະກຳເອ້ຍ້ອງ |
| 14 | ຫັດຖະກຳເຄື່ອງວັດຖຸເງິນ-ຄຳ |
| 15 | ຫັດຖະກຳວັດຖຸບູຮານ |
| 16 | ເຟີນິເຈີໄມ້ປ່ອງ, ໄມ້, ຫວາຍ |
| 17 | ຫັດຖະກຳຜະລິດຄັນຮົ່ມເຈ້ຍ |
| 18 | ຫັດຖະກຳຍິບປັກຖັກແສ່ວ |
| 19 | ແລະ ອື່ນໆ |

**ຂ. ພາກກາງ.**

| ລ/ດ | ປະເພດກິດຈະການດຳເນີນ. |
|---|---|
| 1 | ຕ່ຳແຜ່ນແພ, ຕ່ຳຫູກ-ທໍໄໝ ຫຼື ສາວໄໝ |
| 2 | ຫັດຖະກຳຕ່ຳສິ້ນ |
| 3 | ຫັດຖະກຳຈັກສານຫວາຍ -ໄມ້ປ່ອງ |

| | |
|---|---|
| 4 | ຫັດຖະກຳຍູກອາດ (ແຂມ) |
| 5 | ຫັດຖະກຳປັກແສ່ວ |
| 6 | ຫັດຖະກຳຖັກເສື້ອໄໝພົມ |
| 7 | ແກະສະຫຼັກ ແລະ ຜະລິດຕະພັນໄມ້ |
| 8 | ເຄື່ອງປັ້ນດິນເຜົາ |
| 9 | ເຟີນິເຈີໄມ້ປ່ອງ |
| 10 | ເຈຍລະໄນແກ້ວ, ເຄື່ອງເງິນ |
| 11 | ຜະລິດສາດພື, ສາດເຕີຍ |
| 12 | ຫັດຖະກຳຕີເຫຼັກ, ພ້າ, ມີດ |
| 13 | ຫັດຖະກຳຮູບແຕ້ມ |
| 14 | ຫັດຖະກຳຂອບຮູບ |
| 15 | ແລະ ອື່ນໆ |

**ຄ. ພາກໃຕ້.**

| ລ/ດ | ປະເພດກິດຈະການດຳເນີນ |
|---|---|
| 1 | ຕ່ຳແຜ່ນແພ, ຕ່ຳຫູກ-ທໍ່ໄໝ ຫຼື ສາວໄໝ |
| 2 | ແກະສະຫຼັກ ແລະ ຜະລິດຕະພັນໄມ້ |
| 3 | ຫັດຖະກຳຍູກອາດ (ແຂມ) |
| 4 | ຫັດຖະກຳຕີເຫຼັກ, ພ້າ, ມີດ |
| 5 | ຫັດຖະກຳວັດຖຸບູຮານ |
| 6 | ຫັດຖະກຳຕ່ຳສິ້ນ, ຕີນສິ້ນ |
| 7 | ຫັດຖະກຳຍ້ອມສີທຳມະຊາດຊິ້ນເຜົ່າ |
| 8 | ຫັດຖະກຳຈັກສານສາດເຕີຍ, ຜະລິດເກີບສາດເຕີຍ |
| 9 | ຫັດຖະກຳຂອບຮູບ |
| 10 | ແກະສະຫຼັກຫີນ |
| 11 | ຫັດຖະກຳຈັກສານຫວາຍໄມ້ປ່ອງ |
| 12 | ເຟີນີເຈີຫວາຍ |
| 13 | ເຄື່ອງປັ້ນດິນເຜົາ |
| 14 | ແລະ ອື່ນໆ |

## ເປົ້າໝາຍບຸລິມະສິດສ້າງກຸ່ມຕົວແບບ ໃນທົ່ວປະເທດ
## ( ພະແນກອຸດສາຫະກໍາ ແລະ ການຄ້າແຂວງ ແລະ ນະຄອນຫຼວງວຽງຈັນ ).

ເອກະສານຊ້ອນທ້າຍ 2

### ປີ 2016

| ລ/ດ | ແຂວງ | ກິດຈະກໍາ | ໝາຍເຫດ |
|---|---|---|---|
| 1 | ແຂວງ ຜົ້ງສາລີ | ຫັດຖະກໍາຕໍ່າແຜ່ນ ( ຕໍ່າຫູກ,ທໍໄໝ,ສາວໄໝ ) | |
| 2 | ນະຄອນຫຼວງວຽງຈັນ | ຫັດຖະກໍາຕໍ່າແຜ່ນ | |
| 3 | ແຂວງ ສະຫວັນນະເຂດ | ຫັດຖະກໍາຕໍ່າແຜ່ນ ແລະ ຍ້ອມສີທໍາມະຊາດ | |
| 4 | ແຂວງ ຈໍາປາສັກ | ຫັດຖະກໍາຈັກສານໄມ້ປ່ອງ | |
| 5 | ແຂວງ ເຊກອງ | ຫັດຖະກໍາແກະສະຫຼັກໄມ້ ແລະ ເຟີນິເຈີໄມ້ | |

### ປີ 2017

| ລ/ດ | ແຂວງ | ກິດຈະກໍາ | ໝາຍເຫດ |
|---|---|---|---|
| 1 | ແຂວງ ຫຼວງນໍ້າທາ | ຫັດຖະກໍາປັ້ນດິນຈີ່ | |
| 2 | ແຂວງ ອຸດົມໄຊ | ຫັດຖະກໍາແກະສະຫຼັກໄມ້ ແລະ ເຟີນິເຈີໄມ້ | |
| 3 | ແຂວງ ບໍລິຄໍາໄຊ | ຫັດຖະກໍາແກະສະຫຼັກໄມ້ ແລະ ຄວັດລາຍໄມ້ | |
| 4 | ແຂວງ ໄຊສົມບູນ | ຫັດຖະກໍາຕໍ່າແຜ່ນ (ທໍໄໝ, ສິ້ນ ແລະ ຕີນສິ້ນ ) | |
| 5 | ແຂວງ ຄໍາມ່ວນ | ຫັດຖະກໍາເຄື່ອງປັ້ນດິນເຜົາ | |

### ປີ 2018

| ລ/ດ | ແຂວງ | ກິດຈະກໍາ | ໝາຍເຫດ |
|---|---|---|---|
| 1 | ແຂວງ ບໍ່ແກ້ວ | ຫັດຖະກໍາເຈຍລະໃນເຄື່ອງເອ້ຢ້ອງມີຄ່າ | |
| 2 | ແຂວງ ຄໍາມ່ວນ | ຫັດຖະກໍາຕໍ່າແຜ່ນ ( ຕໍ່າຫູກ, ທໍໄໝ, ສິ້ນ ແລະ ຕີນສິ້ນ ) | |
| 3 | ແຂວງ ອັດຕະປື | ຫັດຖະກໍາເຄື່ອງປັ້ນດິນເຜົາ | |
| 4 | ແຂວງ ສາລະວັນ | ຫັດຖະກໍາຕໍ່າແຜ່ນ ແລະ ຍ້ອມສີທໍາມະຊາດ | |
| 5 | ແຂວງ ຊຽງຂວາງ | ຫັດຖະກໍາຈັກສານໄມ້ປ່ອງ | |

## ປີ 2019

| ລ/ດ | ແຂວງ | ກິດຈະກຳ | ໝາຍເຫດ |
|---|---|---|---|
| 1 | ແຂວງ ຫຼວງພະບາງ | ການຜະລິດໄຄແຜ່ນ | |
| 2 | ແຂວງ ຫົວພັນ | ຫັດຖະກຳແຜ່ນແພຜ້າໄໝມ້ອນ | |
| 3 | ແຂວງ ວຽງຈັນ | ຫັດຖະກຳຈັກສານຫວາຍ ແລະ ໄມ້ປ່ອງ | |
| 4 | ແຂວງ ຈຳປາສັກ | ຫັດຖະກຳປູກມອນລ້ຽງມ້ອນສາວໄໝ | |
| 5 | ແຂວງ ສະຫວັນນະເຂດ | ຫັດຖະກຳແກະສະຫຼັກໄມ້ ແລະ ເຟີນີເຈີໄມ້ | |

## ປີ 2020

| ລ/ດ | ແຂວງ | ກິດຈະກຳ | ໝາຍເຫດ |
|---|---|---|---|
| 1 | ແຂວງ ໄຊຍະບູລີ | ຫັດຖະກຳເຈ້ຍປໍສາ | |
| 2 | ແຂວງ ຊຽງຂວາງ | ຫັດຖະກຳຕ່ຳແຜ່ນ ແລະ ຜະລິດຕະພັນຈາກໄໝມ້ອນ | |
| 3 | ແຂວງ ສາລະວັນ | ຫັດຖະກຳຈັກສານຫວາຍ ແລະ ໄມ້ປ່ອງ | |
| 4 | ແຂວງ ເຊກອງ | ຫັດຖະກຳຜະລິດສາດເຕີຍ | |
| 5 | ແຂວງ ອຸດົມໄຊ | ຫັດຖະກຳຈັກສານໄມ້ປ່ອງ | |

# ປະເພດກິດຈະການທີ່ເປັນບຸລິມະສິດໃນການສົ່ງເສີມທົ່ວປະເທດ

## ( ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ).

**ເອກະສານຊ້ອນທ້າຍ 3**

## ປີ 2016

| ລ/ດ | ຊື່ແຂວງ | ປະເພດ | ບຸລິມະສິດ |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| 2 | ຜົ້ງສາລີ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕ່ຳຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| | | ຜະລິດໄຄແຜ່ນ | I |
| 3 | ຫຼວງນ້ຳທາ | ຜະລິດເຟີນີເຈີຫວາຍ | I |
| | | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| 4 | ອຸດົມໄຊ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| | | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕ່ຳຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| 5 | ບໍ່ແກ້ວ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | I |
| | | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕ່ຳຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| 6 | ຫຼວງພະບາງ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕ່ຳຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| | | ຜະລິດໄຄແຜ່ນ | I |
| 7 | ຫົວພັນ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕ່ຳຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| 8 | ໄຊຍະບູລີ | ຜະລິດໄມ້ຍູກາວາດ | I |
| 9 | ຊຽງຂວາງ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕ່ຳຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| | | ປູກມອນລ້ຽງມ້ອນສາວໃໝ | I |
| 10 | ວຽງຈັນ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕ່ຳຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| | | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | I |
| 11 | ບໍລິຄຳໄຊ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| 12 | ຄຳມ່ວນ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕ່ຳຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| | | ຜະລິດເຄື່ອງປັ້ນດິນເຜົາ | I |

| | | | |
|---|---|---|---|
| 13 | ສະຫວັນນະເຂດ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕໍ່າຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| | | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| 14 | ສາລະວັນ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕໍ່າຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| 15 | ເຊກອງ | ຜະລິດສາດເຕີຍ | I |
| 16 | ຈຳປາສັກ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕໍ່າຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| | | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| 17 | ອັດຕະປື | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| 18 | ໄຊສົມບູນ | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕໍ່າຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I<br>I |

## ປີ 2017

| ລ/ດ | ຊື່ແຂວງ | ປະເພດ | ບຸລິມະສິດ |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ຜະລິດກ້ອຍອິບເນີຍ | I |
| 2 | ຜົ້ງສາລີ | ປັ້ນດິນຈີ່ | I |
| | | ຫັດຖະກຳຊິນເຜົ່າ | I |
| 3 | ຫຼວງນ້ຳທາ | ປັ້ນດິນຈີ່ | I |
| | | ຕໍ່າແຜ່ນ, ແຜ່ນແພໃໝມ້ອນ, ຝ້າຍ ( ຕໍ່າຫູກທໍໃໝ, ສາວໃໝ) ແລະ ຍ້ອມສີທຳມະຊາດ | I |
| 4 | ອຸດົມໄຊ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| | | ແກະສະຫຼັກ ແລະ ຜະລິດຕະພັນໄມ້ | II |
| 5 | ບໍ່ແກ້ວ | ຜະລິດເຟີນີເຈີຫວາຍ | I |
| 6 | ຫຼວງພະບາງ | ຜະລິດແຈ່ວບອງ | I |
| | | ຜະລິດເຈ້ຍປໍສາ | I |
| 7 | ຫົວພັນ | ຜະລິດແຈ່ວປາບົ້າ | III |
| 8 | ໄຊຍະບູລີ | ເຈ້ຍປໍສາ | I |
| 9 | ຊຽງຂວາງ | ແກະສະຫຼັກ ແລະ ຜະລິດຕະພັນໄມ້ | II |
| 10 | ວຽງຈັນ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| 11 | ຄຳມ່ວນ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |
| | | ຜະລິດຝ້າຍມັດໝີ່ | I |

| | | | |
|---|---|---|---|
| 12 | ສະຫວັນນະເຂດ | ຜະລິດເຄື່ອງປັ້ນດິນເຜົາ | I |
| 13 | ສາລະວັນ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | I |
| 14 | ຈຳປາສັກ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | I |
| | | ປູກມອນລ້ຽງມ້ອນສາວໄໝ | I |
| 15 | ອັດຕະປື | ຜະລິດເຄື່ອງປັ້ນດິນເຜົາ | I |
| 16 | ໄຊສົມບູນ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | I |

## ປີ 2018

| ລ/ດ | ຊື່ແຂວງ | ປະເພດ | ບູລິມະສິດ |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ເຄື່ອງປັ້ນດິນເຜົາ | I |
| | | ຕ່ຳແຜ່ນແພດ້ວຍມື | II |
| 2 | ຜົ້ງສາລີ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | I |
| | | ຕີເຫຼັກ | I |
| 3 | ຫຼວງນ້ຳທາ | ຜະລິດໄມ້ຍູກວາດ | I |
| 4 | ອຸດົມໄຊ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| | | ຜະລິດເຈ້ຍປໍສາ | II |
| 5 | ບໍ່ແກ້ວ | ແກະສະຫຼັກ ແລະ ຜະລິດຕະພັນໄມ້ | II |
| 6 | ຫຼວງພະບາງ | ຕ່ຳແຜ່ນແພດ້ວຍມື | II |
| 7 | ຫົວພັນ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | III |
| 8 | ໄຊຍະບູລີ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | III |
| 9 | ຊຽງຂວາງ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| 10 | ວຽງຈັນ | ຜະລິດໄມ້ຍູກວາດ | II |
| 11 | ຄຳມ່ວນ | ຜະລິດແຈ່ວນ້ຳຜັກ | II |
| | | ຕ່ຳແຜ່ນແພດ້ວຍມື | II |
| 12 | ສະຫວັນນະເຂດ | ຜະລິດກ້ອຍອິບເພີຍ | I |
| 13 | ສາລະວັນ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | III |
| 14 | ເຊກອງ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | III |
| 15 | ຈຳປາສັກ | ຜະລິດໄມ້ຍູກວາດ | II |
| | | ແກະສະຫຼັກຫີນ | II |
| 16 | ອັດຕະປື | ຕ່ຳຜ້າກະເສງ ແລະ ຍ້ອມສີທຳມະຊາດ | II |
| 17 | ໄຊສົມບູນ | ຜະລິດໄມ້ຍູກວາດ | II |

## ປີ 2019

| ລ/ດ | ຊື່ແຂວງ | ປະເພດ | ບຸລິມະສິດ |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| 2 | ຜົ້ງສາລີ | ຜະລິດແຈ່ວບອງ | I |
| | | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | III |
| 3 | ຫຼວງນ້ຳທາ | ຕີເຫຼັກ, ເງິນ, ຄຳ ແລະ ວັດຖຸມີຄ່າ | III |
| 4 | ອຸດົມໄຊ | ຜະລິດພາເຂົ້າຫວາຍ | III |
| | | ຜະລິດໄມ້ຢູກາວາດ | III |
| 5 | ບໍ່ແກ້ວ | ເຈຍລະໄນເຄື່ອງເອ້ຍ້ອງມີຄ່າ | II |
| 6 | ຫຼວງພະບາງ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| | | ຫັດຖະກຳຖັກແສ່ວ | II |
| 7 | ຫົວພັນ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | III |
| 8 | ໄຊຍະບູລີ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | III |
| 9 | ຊຽງຂວາງ | ຫັດຖະກຳຖັກແສ່ວ | III |
| 10 | ວຽງຈັນ | ປັ້ນດິນຈີ່ | II |
| 11 | ບໍລິຄຳໄຊ | ຕຳແຜ່ນແພດ້ວຍມື | II |
| 12 | ຄຳມ່ວນ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| | | ຜະລິດໄມ້ຢູກາວາດ | II |
| 13 | ສະຫວັນນະເຂດ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| 14 | ສາລະວັນ | ປັ້ນດິນຈີ່ | II |
| 15 | ຈຳປາສັກ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| | | ຜະລິດເຈ້ຍປໍສາ | III |
| 16 | ໄຊສົມບູນ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | II |

## ປີ 2020

| ລ/ດ | ຊື່ແຂວງ | ປະເພດ | ບຸລິມະສິດ |
|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | III |
| | | ຕີເຫຼັກ, ເງິນ, ຄຳ ແລະ ວັດຖຸມີຄ່າ | III |
| 2 | ຜົ້ງສາລີ | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | I |

| | | | |
|---|---|---|---|
| | | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | III |
| 3 | ຫຼວງນໍ້າທາ | ຜະລິດເຄື່ອງປັ້ນດິນເຜົາ | III |
| 4 | ອຸດົມໄຊ | ຜະລິດເຄື່ອງປັ້ນດິນເຜົາ | III |
| | | ດີເຫຼັກ, ເງິນ, ຄໍາ ແລະ ວັດຖຸມີຄ່າ | III |
| 5 | ບໍ່ແກ້ວ | ຜະລິດໄມ້ຍູກວາດ | III |
| | | ຫັດຖະກໍາຖັກແສ່ວ | III |
| 6 | ຫຼວງພະບາງ | ດີເຫຼັກ, ເງິນ, ຄໍາ ແລະ ວັດຖຸມີຄ່າ | III |
| | | ແກະສະຫຼັກໄມ້, ຄວັດລາຍ ແລະ ເຟີນີເຈີໄມ້ | III |
| 7 | ໄຊຍະບູລີ | ຕໍ່າແຜ່ນແພດ້ວຍມື | II |
| 8 | ຊຽງຂວາງ | ຜະລິດແຈ່ວບອງ | III |
| 9 | ວຽງຈັນ | ຫັດຖະກໍາຖັກແສ່ວ | III |
| | | ດີເຫຼັກ, ເງິນ, ຄໍາ ແລະ ວັດຖຸມີຄ່າ | III |
| 10 | ບໍລິຄໍາໄຊ | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | II |
| 11 | ຄໍາມ່ວນ | ດີເຫຼັກ, ເງິນ, ຄໍາ ແລະ ວັດຖຸມີຄ່າ | III |
| 12 | ສະຫວັນນະເຂດ | ດີເຫຼັກ, ເງິນ, ຄໍາ ແລະ ວັດຖຸມີຄ່າ | III |
| 13 | ເຊກອງ | ຕໍ່າແຜ່ນແພດ້ວຍມື | II |
| 14 | ຈໍາປາສັກ | ສານສາດເຕີຍ | III |
| | | ຫັດຖະກໍາຂອບຮູບ | III |
| 15 | ອັດຕະປື | ຈັກສານຫວາຍ, ໄມ້ປ່ອງ ແລະ ເຄືອໄມ້ | III |
| 16 | ໄຊສົມບູນ | ຕໍ່າແຜ່ນແພດ້ວຍມື | III |

**<u>ໝາຍເຫດ:</u>** ຂໍ້ມູນຂ້າງເທິງແມ່ນໄດ້ມາຈາກບັນດາພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ.